# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 27 ມິຖຸນາ 2021 (06-27-2021)

## ເຂັ້ມແຂງໃນຄວາມບໍຣິສຸດ.

ເມື່ອໃດທີ່ການບໍ່ສົນໃຈໃນຄຳຕັກເຕືອນເປັນຄວາມຜິດພາດ?

**ຈຸດສຳຄັນໃນບົດຮຽນ:** ຄວາມບໍຣິສຸດໃນທຸກສິ່ງສົ່ງຜົນກະທົບຕໍ່ການຮັບໃຊ້ຂອງທ່ານຕໍ່ພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຄຳຕັກເຕືອນມາເຖິງພວກເຮົາໃນຫຼາຍຮູບແບບດັ່ງຕໍ່ລົງໄປນີ້:

- ບາງຄຳເຕືອນຕົກຢູ່ໃນຮູບແບບຢ່າງຊັດເຈນແລະບໍ່ຈຳເປັນ. ພວກເຮົາຈຳເປັນບໍ່ທີ່ຈະມີຄຳເຕືອນພິມອອກມາໂຕໃຫຍ່ໆວ່າ "**ຢ່າໃຊ້ເຄື່ອງເປົ່າຜົມໄຟຟ້າເວລາອາບນ້ຳ**"???
- ບາງຄຳເຕືອນມາພ້ອມກັບສັນຍານຂອງການໂລ່ງເອິກໂລ່ງໃຈ. ທ່ານເຂົ້າໃຈສິ່ງນີ້ຖ້າຫາກວ່າແທນທີ່ຈະໄດ້ບັດປັບໄໝຂັບຣົດເກີນຄວາມໄວ, ພຽງແຕ່ໄດ້ບັດຕັກເຕືອນເທົ່ານັ້ນ: ຕຳຫຼວດຈະລາຈອນປ່ອຍທ່ານໄປຟຣີໆ.
- ບາງຄຳເຕືອນຈັບຄວາມສົນໃຈຂອງພວກເຮົາໂດຍທັນທີທັນໃດ: ໃນເມື່ອປ້າຍທາງຫຼວງເຕືອນວ່າ: "**ສະພານຢູ່ທາງໜ້າຫັກຖລົ່ມລົງແລ້ວ**" ຫຼືທ່ານໝໍບອກທ່ານວ່າ: "**ອາການສຸຂພາບຂອງທ່ານກຳລັງຈະພາທ່ານໄປສູ່ໂຣກຫົວໃຈວາຍ**". ພວກເຮົາແນ່ນອນປ່ຽນທິດທາງ-ຫຼື ຢ່າງນ້ອຍພວກເຮົາຈຳເປັນຕ້ອງເຮັດ (ຄືປ່ຽນທິດທາງ)! ພວກເຮົາຈະຟັງຄຳຕັກເຕືອນນັ້ນຈິງຈັງຊ່ຳໃດສາມາດຂຶ້ນຢູ່ກັບວ່າ: <u>ແມ່ນໃຜເປັນຜູ້ໃຫ້ຄຳຕັກເຕືອນນັ້ນ</u>?

ພວກເຮົາອາດຈະເອົາໃຈໃສ່ຄຳເຕືອນຈາກເພື່ອນບ້ານໃກ້ຄຽງກ່ຽວກັບສຸຂພາບຂອງພວກເຮົາ, ແຕ່ວ່າເມື່ອຄຳເຕືອນມາຈາກທ່ານໝໍຂອງພວກເຮົາ, ພວກເຮົາກໍຕ້ອງໄດ້ຮັບຟັງຢ່າງລະມັດລະວັງ. ເມື່ອຄຳຕັກເຕືອນນັ້ນມາຈາກພຣະເຈົ້າ, ພວກເຮົາສົມຄວນເອົາໃຈໃສ່ຢ່າງແນ່ນອນ! ນັ້ນແມ່ນປະສົບການຂອງຄຣິສຕະຈັກເມືອງທົວເຕຣາ(Thyatira). ພວກເພິ່ນຕ້ອງການຫຼັກສູດການແກ້ໄຂ, ແລະພຣະເຢຊູໄດ້ຊົງຕັກເຕືອນພວກເຂົາເຈົ້າວ່າຈະມີຫຍັງເກີດຂຶ້ນຖ້າພວກເພິ່ນບໍ່ຍອມປ່ຽນແປງ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ພຣະນິມິດ 2:18-19</u>

18 *"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງທົວເຕຣາວ່າ 'ພຣະບຸດຂອງພຣະເຈົ້າຜູ້ຊົງມີພຣະເນດ*
*ເໝືອນດັ່ງແປວໄຟ ແລະມີພຣະບາດເໝືອນດັ່ງທອງເຫຼືອງກ້ຽງ ຊົງກ່າວດັ່ງນີ້ວ່າ:* 19 *"ເຮົາຮູ້ຈັກການກະທຳຂອງເຈົ້າ*
*ຮູ້ຄວາມຮັກ, ຄວາມເຊື່ອ, ການປະຕິບັດ, ແລະຄວາມພຽນອົດທົນຂອງເຈົ້າ ຮູ້ວ່າການເບື້ອງປາຍຂອງເຈົ້າມີຫຼາຍ*
*ກວ່າການເບື້ອງຕົ້ນ.*

ເມືອງທົວເຕຣາບໍ່ໄດ້ແມ່ນເມືອງໃຫຍ່ປຽບທຽບກັບເມືອງອື່ນໆທີ່ພຣະເຢຊູໄດ້ຊົງກ່າວເຖິງໃນພຣະຄັມພີພຣະນິມິດບົດທີ 2 ແລະ 3. ມັນເປັນເມືອງທີ່ໄດ້ຖືກປ້ອງກັນຮັກສານ້ອຍແລະຖືກລຸກລາມ, ແຕ່ວ່າສິ່ງທີ່ເມືອງທົວເຕຣາມີຄືສິນຄ້ານາໆປະການແລະການແລກປ່ຽນດ້ານຜລິຕຜົນ. ບາງທີແມ່ນເມືອງທີ່ມີຊື່ສຽງຮູ້ຈັກດີສຳລັບສິນຄ້າ<u>**ຜ້າສີມ່ວງ**</u>-ແມ່ນຜ້າສີມ່ວງອັນດຽວກັນກັບທີ່ນາງ ລີເດັຽ ໄດ້ຂາຍ(ກຈກ 16:14)-ຊຶ່ງຍັງຄົງຜລິດແລະຊື້ຂາຍຢູ່ໃນທຸກວັນນີ້ໃນຂົງເຂດ

ນັ້ນ. ເໝືອນກັບຕົວເມືອງ, ຄຣິສຕະຈັກທົວເຕຣາອາດຈະນ້ອຍໆ, ແຕ່ວ່າມັນເປັນຄຣິສຕະຈັກທີ່ມີການເຄື່ອນໄຫວ.

ພຣະເຢຊູໄດ້ຊົງກ່າວເຖິງຄຣິສຕະຈັກນີ້ໂດຍ: 1. ຊົງລະບຸພຣະອົງເອງວ່າຊົງເປັນ: "ພຣະບຸດຂອງພຣະເຈົ້າ." ພຣະເຢຊູໄດ້ຊົງເນັ້ນໜັກຄວາມເປັນພຣະເຈົ້າຂອງພຣະອົງ. 2. ພຣະເຢຊູໄດ້ຊົງບັນລະຍາຍພຣະອົງເອງວ່າຊົງເປັນນັກຣົບ "ຜູ້ຊົງມີພຣະເນດເໝືອນດັ່ງແປວໄຟ ແລະມີພຣະບາດເໝືອນດັ່ງທອງເຫລືອງກ້ຽງ" (ຂໍ້ 18). ໃນຖານະທີ່ເປັນພຣະບຸດຂອງພຣະເຈົ້າ, ດວງຕາຂອງພຣະອົງຊົງສາມາດເຈາະຜ່ານທາງໜ້າທີ່ຄົນເຮົາເອົາວາງໄວ້ແລະສາມາດທະລຸເຂົ້າໃປໃນຫົວໃຈສິ່ງທີ່ກຳລັງເກີດຂຶ້ນ- ແລະນັ້ນແມ່ນສິ່ງທີ່ພຣະເຢຊູຊົງໄດ້ກະທຳໃນຈົດໝາຍເຖິງເມືອງທົວເຕຣານີ້. ດ້ວຍຄຳວ່າ "ພຣະບາດເໝືອນດັ່ງທອງເຫຼືອງ" ແມ່ນຄຳສັບທີ່ໃຊ້ກ່ຽວກັບພະນັກງານຂອງບໍ່ທອງ ເຫຼືອງທີ່ໄດ້ລະບຸໄວ້-ພຣະອົງຊົງສາມາດຢຽບຢ່ຳຄວາມບາບໃດໆຢູ່ໃຕ້ພຣະບາດອັນຍິ່ງໃຫຍ່ຂອງພຣະອົງ.

ພຣະເຢຊູຊົງຍົກຍ້ອງຄຣິສຕະຈັກທີ່ເມືອງທົວເຕຣາສຳລັບ 4 ຢ່າງທີ່ເຂົາເຈົ້າເຮັດຖືກຕ້ອງ: <u>ຄວາມຮັກ</u>, <u>ຄວາມສັດຊື່</u>, <u>ການຮັບໃຊ້</u>, ແລະ<u>ຄວາມອົດທົນ</u>. ມັນແມ່ນຄວາມຮັກອາກາເປ້ (Agape), ຄວາມຮັກທີ່ບໍ່ເຫັນແກ່ຕົວທີ່ໄດ້ເວົ້າເຖິງຜູ້ທີ່ເຊື່ອເຫລົ່ານີ້ທີ່ມີຕໍ່ພຣະຄຣິດ ແລະເປັນຜົນມາຈາກການກະທຳຂອງພວກເຂົາເຈົ້າຕໍ່ຄົນທີ່ຢູ່ອ້ອມຮອບພວກເພິ່ນ. ພຣະເຢຊູໄດ້ຊົງບອກພວກເຂົາເຈົ້າວຽກງານປັດຈຸບັນ, ສິ່ງທີ່ພວກເພິ່ນກຳລັງເຮັດຢູ່ເພື່ອຂຍັບຂຍາຍພຣະຣາຊອານາຈັກຂອງພຣະເຈົ້າ, ແມ່ນເປັນສິ່ງທີ່ "<u>ໃຫຍ່ກວ່າຄັ້ງແລກ</u>" ທີ່ພວກເພິ່ນໄດ້ເຮັດ. ເວົ້າອີກຢ່າງນຶ່ງ,*<u>ຄວາມຮັກແລະຄວາມສັດຊື່ຂອງພວກເພິ່ນນັ້ນຈະເຣີນເຕີບໂຕ, ແລະການຮັບໃຊ້ແລະຄວາມອົດທົນຂອງພວກເຂົາເຈົ້າໄດ້ເພີ່ມຂຶ້ນ</u>!* ໃນຂນະທີ່ພວກເຮົາມີຄວາມຮັກປະເພດນັ້ນສຳລັບພຣະຄຣິດເໝືອນດັ່ງບັນດາຜູ້ທີ່ເຊື່ອເຫຼົ່ານີ້, ບັນດາຄົນອື່ນໆຈະເບິ່ງເຫັນສິ່ງເຫຼົ່ານັ້ນຜ່ານການຮັບໃຊ້ຂອງພວກເຮົາຕໍ່ພຣະອົງ**<u>ໃນທຸກໆມຸມມອງຂອງຊີວິດຂອງພວກເຮົາ</u>**. ພວກເຮົາຈະເປັນຄົນສລາດທີ່ໄດ້ຮຽນຮູ້ຈາກຄຣິສຕະຈັກເລັ່ມແລກນີ້<u>ໃນວິຖີທາງທີ່ພວກເຂົາເຈົ້າໄດ້ຮັກແລະໄດ້ຮັບໃຊ້ຄົນອື່ນໆ</u>.

| |
|---|
| *ຄຣິສຕະຈັກຂອງພວກເຮົາສະແດງຄວາມຮັກ, ຄວາມສັດຊື່, ການຮັບໃຊ້, ແລະຄວາມອົດທົນແນວໃດ?* |

## 2. <u>ພຣະນິມິດ 2:20-23</u>

*20 ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າ ຄືເຈົ້າຍອມທົນຟັງຜູ້ຍິງຊື່ເຢຊາເບັນ ທີ່ອ້າງຕົວເປັນຜູ້ປະກາດພຣະທັມ ຍິງນັ້ນສອນ*
*ແລະລໍ້ລວງພວກຂ້ອຍໃຊ້ຂອງເຮົາໃຫ້ລ່ວງຜິດຊາຍຍິງ ແລະໃຫ້ກິນຂອງທີ່ບູຊາແກ່ພຣະທຽມແລ້ວ. 21 ເຮົາໄດ້ໃຫ້ຍິງ*
*ນັ້ນມີໂອກາດທີ່ຈະກັບໃຈໃໝ່ ແຕ່ນາງບໍ່ຢາກກັບໃຈຈາກການຜິດຊາຍຍິງຂອງຕົນ. 22 ດັ່ງນີ້ເຮົາຈະຖິ້ມຍິງນັ້ນໄວ້*
*ເທິງບ່ອນນອນ ແລະຄົນທັງຫລາຍທີ່ລ່ວງຜິດຊາຍກັບຍິງນັ້ນ ເຮົາຈະຖິ້ມໄວ້ໃນຄວາມ ທຸກລຳບາກອັນໜັກ ເວັ້ນໄວ້*
*ແຕ່ຄົນເຫລົ່ານັ້ນຈະກັບໃຈເສັຽໃໝ່ຈາກບັນດາການກະທຳຂອງຍິງນັ້ນ. 23 ຝ່າຍລູກຂອງຍິງນັ້ນ ເຮົາຈະປະຫານເຂົາ*
*ໃຫ້ຕາຍເສັຽ ແລະຄຣິສຕະຈັກທັງປວງຈະໄດ້ຮູ້ວ່າເຮົານີ້ເປັນຜູ້ຊັ້ນນະສູດເບິ່ງຈິດໃຈ ເຮົາຈະໃຫ້ຣາງວັນແກ່ເຈົ້າທັງ-*
*ຫລາຍທຸກຄົນຕາມການກະທຳຂອງຕົນ.*

ນີ້ແມ່ນຄຣິສຕະຈັກທີ່ປະຕິບັດດີໃນຄວາມຮັກ, ຄວາມສັດຊື່, ການຮັບໃຊ້,ແລະມີຄວາມອົດທົນ. ຄວາມຈິງແລ້ວ, ພວກເຂົາເຈົ້າເຕີບໃຫຍ່ໃນເຣື່ອງເຫຼົ່ານີ້, ເຖິງປານນັ້ນພຣະເຢຊູຍັງຊົງໄດ້ຕຳໜິພວກເພິ່ນ. ເຖິງແມ່ນວ່າພວກເຂົາເຈົ້າໄດ້ຮັກອົງພຣະຄຣິດ, ພວກເພິ່ນໄດ້ທົນທານຕໍ່ການຜິດສິນທັມ ແລະການກາບໄຫວ້ຮູບໂຄຣົບພາຍໃນຄຣິສຕະຈັກ. ບຸກຄົນສຳຄັນທີ່ຢູ່ເບື້ອງຫຼັງຂອງຄວາມບາບເຫຼົ່ານີ້ແມ່ນຍິງຄົນນຶ່ງທີ່ພຣະເຢຊູໄດ້ຊົງລະບຸໄວ້ແມ່ນຊື່ວ່ານາງເຢຊາເບັນ. ເຢຊາເບັນອາດຈະບໍ່ແມ່ນຊື່ຈິງຂອງນາງແຕ່ແມ່ນສິ່ງສະທ້ອນຂອງນິສັຍໃຈຄໍຂອງນາງ. ຜູ້ຍິງຄົນນີ້ໄດ້ປະພຶດຕົວຄືກັບ ຣາຊິນີເຢຊາເບັນ ທີ່ຊົ່ວຮ້າຍໃນພຣະຄັມພີພຣະສັນຍາເດີມຜູ້ທີ່ສົ່ງເສີມການນະມັສການພະບາອານໃນບັນດາປະ

ຊາກອນຂອງພຣະເຈົ້າ (1 ກສ 16:31).

ໂດຍພຣະຄຸນຂອງພຣະອົງ, ພຣະຄຣິດ "ຊົງໄດ້ໃຫ້ຍິງນັ້ນມີໂອກາດທີ່ຈະກັບໃຈໃໝ່" (ຂໍ້ 21), ແຕ່ນາງໄດ້ປະຕິເສດທີ່ຈະເຮັດເຊັ່ນນັ້ນ. ເຫດສະນັ້ນ, ການຕັດສິນຂອງພຣະອົງຈຶ່ງໄດ້ມາຕົກເຖິງນາງ- ແລະມັນເປັນການຮ້າຍແຮງ. ແຕ່ການກ່າວໂທດຂອງພຣະເຢຊູບໍ່ແມ່ນພຽງແຕ່ຕໍ່ຕ້ານຜູ້ທຳນວາຍທີ່ບໍ່ຖືກຕ້ອງຄືນາງເຢຊາເບັນເທົ່ານັ້ນ. ການກ່າວໂທດຂອງພຣະອົງແມ່ນຕໍ່ຕ້ານບັນດາຜູ້ທີ່ຢູ່ໃນຄຣິສຕະຈັກເມືອງທົວເຕຣາທີ່ໄດ້ຍອມເຮັດຕາມຄຳສອນຂອງນາງເໝືອນກັນ.

ມັນເປັນທີ່ໜ້າສົນໃຈທີ່ພຣະເຈົ້າເຊື່ອມໂຍງການຜິດສິນທັມທາງເພດກັບການນະມັສການຮູບໂຄຣົບ. ພຣະອົງຊົງທຳເຊັ່ນນັ້ນກໍເພາະວ່າໃນທີ່ສຸດແລະໂດຍແນ່ນອນສິ່ງນຶ່ງ(ຜິດສິນທັມ)ຈະນຳໄປສູ່ອີກສິ່ງນຶ່ງ(ນະມັສການຮູບໂຄຣົບ). ແມ່ນຫຍັງກໍຕາມທີ່ທ່ານຢູ່ເພື່ອສິ່ງນັ້ນ, ມັນຈະກັບກາຍເປັນພຣະເຈົ້າສຳລັບຜູ້ນັ້ນ. ບັນດາຜູ້ທີ່ສມັກໃຈປະຕິບັດການຜິດສິນທັມທາງເພດ ໄດ້ເລືອກເອົາການລະເມີດຕໍ່ຄຳສັ່ງຂອງພຣະເຈົ້າ, ແລະດ້ວຍເຫດນີ້ພວກເຂົາເຈົ້າໄດ້ກາຍເປັນຜູ້ນະມັສການຮູບໂຄຣົບ. ເມື່ອການພິພາກສາຂອງພຣະເຈົ້າມາຕໍ່ຕ້ານບາບດັ່ງກ່າວ- ແລະມັນກໍຈະເປັນເຊັ່ນນັ້ນ! ມັນສົ່ງຂໍ້ຄວາມທີ່ *ຈະແຈ້ງ*ໄປເຖິງຄຣິສຕະຈັກອື່ນໆ. "…*ແລະຄຣິສຕະຈັກທັງປວງຈະໄດ້ຮູ້ວ່າເຮົານີ້ເປັນຜູ້ຊົງຊັ້ນນະສູດເບິ່ງຈິດໃຈ ເຮົາຈະໃຫ້ຣາງວັນແກ່ເຈົ້າທັງຫຼາຍທຸກຄົນຕາມການກະທຳຂອງຕົນ*" ຂໍ້ 23).

ພວກເຮົາເປັນຂອງພຣະເຈົ້າເຕັມປ່ຽມ, <u>ພຣະອົງຜູ້ຊົງເປັນພຣະເຈົ້າອົງທ່ຽງທັມ</u>. ພຣະອົງຜູ້ຊົງເປັນພຣະເຈົ້າຜູ້ຊົງຕັດສິນຈິດໃຈແລະຫົວໃຈຂອງພວກເຮົາ. ພຣະອົງຜູ້ຊົງເປັນອົງສັບພັນຍູຮູ້ສາຣະພັດຢ່າງທີ່ພວກເຮົາຄິດແລະຊົງທອດພຣະເນດເຫັນທຸກສິ່ງທຸກຢ່າງທີ່ພວກເຮົາກຳລັງເຮັດຢູ່. ມັນແມ່ນໂດຍການແນມເບິ່ງແລະການເລືອກຂອງເຮົາທີ່ເຮົາຈະໄດ້ຮັບລາງວັນຫລືການກ່າວໂທດຂອງເຮົາ. ມັນແມ່ນໂດຍການຢັ່ງຮູ້(ສລາດ)ແລະການເລືອກຂອງພວກເຮົາທີ່ເຮົາຈະໄດ້ຮັບ<u>ຣາງວັນຫຼືການກ່າວໂທດ</u>(ປະນາມ)ຂອງເຮົາ. ໃນນາມຜູ້ຕິດຕາມອົງພຣະຄຣິດ, ພວກເຮົາຈຳເປັນຕ້ອງບໍ່

**<u>ຍອມໃຫ້ການຜິດສິນທັມທາງເພດ ແລະ ການນະມັສການຮູບໂຄຣົບເຂົ້າມາໃກ້ຄຣິສຕະຈັກຂອງພວກເຮົາຈັກເທື່ອ.</u>**

*ແມ່ນຫຍັງແມ່ນນິສັຍໃຈຄໍບາງຢ່າງຂອງບຸກຄົນຜູ້ຊຶ່ງດຳເນີນຊີວິດດ້ວຍຄວາມບໍຣິສຸດ?*

## 3. <u>ພຣະນິມິດ 2:24-29</u>

*24 ແຕ່ພວກເຈົ້າທີ່ຍັງເຫລືອຢູ່ທີ່ເມືອງທົວເຕຣາ ຄືຜູ້ທີ່ບໍ່ໄດ້ຖືຄຳສອນນີ້ ແລະບໍ່ຮູ້ຈັກສິ່ງທີ່ເຂົາເອີ້ນວ່າຄວາມເລິກລັບຂອງຊາຕານນັ້ນ ເຮົາຂໍບອກວ່າເຮົາບໍ່ເອົາພາຣະອື່ນໃດວາງໃສ່ພວກເຈົ້າ. 25 ແຕ່ສິ່ງທີ່ເຈົ້າທັງຫລາຍມີຢູ່ແລ້ວນັ້ນຈົ່ງຍຶດຖືໄວ້ໃຫ້ໝັ້ນຈົນກວ່າເຮົາຈະມາ. 26 ຜູ້ທີ່ມີຊັຍຊະນະແລະຖືຮັກສາກິຈການຂອງເຮົາໄວ້ຈົນເຖິງທີ່ສຸດ ເຮົາຈະໃຫ້ຜູ້ນັ້ນມີອຳນາດປົກຄອງບັນດາປະຊາຊາດ. 27 ແລະຜູ້ນັ້ນຈະບັງຄັບບັນຊາເຂົາດ້ວຍຄ້ອນເຫລັກ ເໝືອນດັ່ງຊ່າງໝໍ້ທຳລາຍໝໍ້ດິນໃຫ້ແຕກມຸ່ນເສັ່ງ ຕາມທີ່ເຮົານີ້ໄດ້ຮັບອຳນາດຈາກພຣະບິດາຂອງເຮົາເໝືອນກັນ. 28 ແລະເຮົາຈະປະທານດາວເພັກໃຫ້ແກ່ຜູ້ນັ້ນ. 29 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ'."*

ລັດທິ(ພິທີສາສນາ)ແລະສາສນາລຶກລັບໄດ້ຈະເຣີນຮຸ່ງເຮືອງໃນສະຕະວັດທຳອິດ. ຄຸນລັກສະນະທົ່ວໄປຄືຄຳໝັ້ນຄຳສັນຍາວ່າຫຼັງຈາກບຸກຄົນໃດບຸກຄົນນຶ່ງໄດ້ຮັບການປະທັບໃຈ (ລິເລີ່ມ) ແລ້ວ, ລາວຈະໄດ້ຮັບ"ຄວາມລັບອັນເລິກລັບ" ຫຼື "ປັນຍາພິເສດ". ທີ່ເປັນໜ້າເຍາະເຍີ້ຍນັ້ນແມ່ນວ່ານາງເຢຊາເບັນອ້າງວ່ານາງເປັນສາສດາຈານ(ຜູ້ທຳນວຍ)ຂອງພຣະເຈົ້າແລະອ້າງວ່າເອົາຄຳເວົ້າມາຈາກພຣະເຈົ້າ, ແຕ່ວ່າທຸກສິ່ງທີ່ນາງໄດ້ຈັດຫາມາໃຫ້ແມ່ນຄວາມຮູ້ແລະຄວາມຂີ້ຕົວະຈາກມະຣິກເທົ່ານັ້ນ. ສະນັ້ນ, "<u>ຄວາມລັບເລິກໆ</u>" ເຫຼົ່ານີ້ສຳລັບຜູ້ທີ່ພິເສດພໍທີ່ຈະໄດ້ຮັບມັນແມ່ນບໍ່ມີ

ຫຍັງນອກເໜືອໄປກວ່າ: "ສິ່ງທີ່ເຂົາເອີ້ນວ່າຄວາມເລິກລັບຂອງຊາຕານ" (ຂໍ້ 24).

*ມີບາງວິທີທາງໃດທີ່ຄຣິສຕະຈັກຂອງທ່ານຄ້າຍຄືຄຣິສຕະຈັກຂອງເມືອງທົວເຕຣາ?*

ແຕ່ຂໍຂອບໃຈ, ບໍ່ແມ່ນທຸກຄົນໃນເມືອງ ທົວເຕຣາໄດ້ຖືກຫຼອກລວງໂດຍການສິດສອນຂອງນາງເຢຊາເບັນຫຼືຖືກຈັບກຸມໂດຍຄວາມລັບທີ່ຊົ່ວຮ້າຍຂອງນາງ. ຕໍ່ບັນດາຜູ້ທີ່ເຊື່ອທີ່ສັດຊື່ເຫຼົ່ານີ້, ພຣະເຢຊູໄດ້ຊົງໃຫ້ພວກເຂົາເຈົ້າພຽງຂໍ້ກ່າວຫາດຽວເທົ່ານັ້ນຄື: "ແຕ່ສິ່ງທີ່ເຈົ້າທັງຫຼາຍມີຢູ່ແລ້ວນັ້ນ ຈົ່ງຍຶດຖືໄວ້ໃຫ້ໝັ້ນຈົນກວ່າເຮົາຈະມາ." (ຂໍ້ 25). ບັນດາຜູ້ທີ່ເຊື່ອເຫຼົ່ານີ້ໄດ້ຮັບການກະຕຸ້ນໃຫ້<u>ຍຶດໝັ້ນໃນຄວາມຈິງທີ່ພວກເຂົາເຈົ້າໄດ້ຮຽນຮູ້ຈາກພຣະຄໍາຂອງພຣະເຈົ້າ</u>.

ພວກເຮົາຈະຫຼີກລ້ຽງການຫຼອກລວງຂອງນາງເຢຊາເບັນໄດ້ແນວໃດ? ພວກເຮົາຕ້ອງຕິດກັບຂ່າວປະເສີດ. ພວກເຮົາຕ້ອງຍຶດໝັ້ນຢູ່ໃນຖ້ອຍຄໍາຂອງພຣະເຈົ້າ. <u>ພຣະຄໍາຂອງພຣະອົງແມ່ນ**ຄວາມຈິງ**,ແລະໂດຍພຣະຄໍານັ້ນພວກເຮົາສາມາດເຫັນໄດ້ສິ່ງທີ່ບໍ່ແມ່ນຄວາມຈິງ</u>. ພວກເຮົາຈໍາເປັນຕ້ອງດຸໝັ່ນໃນການສຶກສາຂອງພວກເຮົາເພື່ອຮັບປະກັນວ່າພວກເຮົາ:"*ຈົ່ງອົດສາພະຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກ ພຣະເຈົ້າ, ເປັນຄົນງານທີ່ບໍ່ຕ້ອງອາຍແລະໃຊ້ພຣະທັມແຫ່ງຄວາມຈິງຢ່າງຖືກຕ້ອງ.*" (2 ທມທ 2:15).

ເຖິງຄຣິສຕະຈັກເມືອງທົວເຕຣາ, ພຣະເຢຊູຊົງໄດ້ໃຫ້ພຣະສັນຍາ 2 ຢ່າງ: 1.) ອໍານາດເໜືອປະຊາຊາດ, ແລະ 2.) ດາວຮຸ່ງຍາມເຊົ້າ. ພຣະເຢຊູຊົງເປັນດາວຮຸ່ງຍາມເຊົ້າແລະພຣະອົງໄດ້ຊົງໃຫ້ສັນຍາອໍານາດເໜືອທຸກສິ່ງແກ່ພວກເຮົາໃນຂນະທີ່ພວກເຮົາຕິດຕາມພຣະອົງ. <u>**ບໍ່ມີສິ່ງໃດທີ່ຍິ່ງໃຫຍ່ໄປກວ່າຄວາມສໍາພັນສ່ວນຕົວກັບພຣະຄຣິດ**</u>.

*ກຸ່ມຂອງພວກເຮົາສາມາດຊ່ວຍເຫຼືອກັນແລະກັນໃນການຍັງຄົງຢູ່ຢ່າງສັດຊື່ໃນຂ່າວປະເສີດໄດ້ຢ່າງໃດ?*

## ນໍາໃຊ້ໃນຊີວິດ:

ພວກເຮົາສາມາດຍັງຄົງຢູ່ຢ່າງບໍຣິສຸດໃນພຣະຄຣິດໄດ້ຢ່າງໃດ? ຈົ່ງເລືອກເອົານຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ຈົ່ງຕັ້ງໝັ້ນ.** ໃນຂນະທີ່ທ່ານຕື່ນນອນແຕ່ລະວັນ, ແມ້ກະທັ້ງກ່ອນທີ່ທ່ານຈະລຸກອອກຈາກຕຽງນອນ, ຈົ່ງອະທິຖານແລະທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງປະທານພລັງໃຫ້ໄດ້ມີຊີວິດຢູ່ເພື່ອພຣະອົງແລະໂດຍມາຕຖານຂອງພຣະອົງໃນຂະນະທີ່ທ່ານດໍາເນີນຊີວິດຜ່ານມື້ນັ້ນ.
- **ຈົ່ງປຽບທຽບ.** ຈົ່ງຈົດບັນຊີສິ່ງທີ່ຊາວໂລກເວົ້າວ່າດີຢ່າງສົມບູນທີ່ຈະເຮັດ. ຈົ່ງປຽບທຽບສິ່ງເຫຼົ່ານັ້ນກັບສິ່ງທີ່ພຣະຄັມພີຊົງກ່າວໄວ້ກ່ຽວກັບສິ່ງນັ້ນ(ສິ່ງທີ່ຊາວໂລກເວົ້າ). ຈົ່ງຂຸດເລິກເຂົ້າໄປໃນພຣະຄັມພີແລະຊອກຫາຂໍ້ພຣະຄັມພີທີ່ຕັກເຕືອນ, ສັ່ງສອນ, ແກ້ໄຂກ່ຽວກັບສິ່ງເຫຼົ່ານັ້ນ.
- **ຈົ່ງເປັນພະຍານ.** ຖ້າທ່ານມີເພື່ອນຝູງໝູ່ຄູ່ທີ່ໂອບກອດການປະຕິບັດທາງໂລກ: ກາບໄຫວ້ຮູບໂຄຣົບແລະປະພຶດຜິດສິລທັມທາງເພດ,ຈົ່ງໃຊ້ເວລານັດພົບເພື່ອຢ້ຽມຢາມ. ຈົ່ງອະທິຖານເພື່ອແບ່ງປັນກັບລາວຄວາມຈິງໃນພຣະຄັມພີ ແລະຜົນປໂຍດທີ່ພຣະຄັມພີມອບໃຫ້ເພື່ອເອົາຊະນະການຫຼອກລວງຂອງຄວາມບາບນັ້ນ.

ຄຣິສຕະຈັກເມືອງທົວເຕຣາໄດ້ມີຄວາມເຊື່ອທີ່ຍິ່ງໃຫຍ່ ແລະພວກຄຣິສຕຽນສືບຕໍ່ຈະເຣີນເຕີບໂຕໃນຄວາມເຊື່ອນັ້ນ. <u>**ຂໍໃຫ້ພວກເຮົາທັງຫຼາຍພະຍາຍາມເຕີບໃຫຍ່ໃນຄວາມເຊື່ອແລະການຮັບໃຊ້ຂອງເຮົາເຊັ່ນດຽວກັນ**</u>.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍ SSK**